ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 36 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 15.02.2019.

# ດຳລັດ
## ວ່າດ້ວຍການສ້າງຕັ້ງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມດຳລັດ ວ່າດ້ວຍປ່າສະຫງວນ ສະບັບເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015;
- ອີງຕາມໜັງສືສະເໜີ ສະບັບເລກທີ 0029/ກປ, ລົງວັນທີ 15 ມັງກອນ 2019 ຂອງກະຊວງກະສິກຳ ແລະ ປ່າໄມ້.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກ ເພື່ອປະກາດສ້າງຕັ້ງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແນໃສ່ ຄຸ້ມຄອງ, ປົກປັກຮັກສາສິ່ງແວດລ້ອມ, ປ່າໄມ້, ຊັບພະຍາກອນປ່າໄມ້, ພັນສັດນ້ຳ-ສັດປ່າ ແລະ ແຫຼ່ງກຳເນີດຂອງຕົ້ນນ້ຳລຳທານ, ອະນຸລັກຮັກສາໄວ້ຄວາມສວຍສົດງົດງາມຂອງທິວທັດທຳມະຊາດ, ຮ່ອງຮອຍປະຫວັດສາດ, ວັດທະນະທຳ, ເປັນບ່ອນພັກຜ່ອນ, ທ່ອງທ່ຽວ ແລະ ສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ**

ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ຕັ້ງຢູ່ແຂວງ ຄຳມ່ວນ ກວມເອົາ 3 ເມືອງ ຄື: ເມືອງນາກາຍ, ເມືອງຍົມມະລາດ ແລະ ເມືອງບົວລະພາ ແລະ ແຂວງບໍລິຄຳໄຊ ຄື: ເມືອງຄຳເກີດ ຊຶ່ງຢູ່ໃນລະຫວ່າງເສັ້ນແວງ ແລະ ເສັ້ນຂະໜານ ດັ່ງນີ້:

| | | |
|---|---|---|
| ທິດເໜືອ | ເສັ້ນແວງ | 105°09'37.3"E |
| | ເສັ້ນຂະໜານ | 18°23'21.3"N |
| ທິດຕາເວັນອອກ | ເສັ້ນແວງ | 105°38'36.4"E |
| | ເສັ້ນຂະໜານ | 17°59'18.4"N |
| ທິດໃຕ້ | ເສັ້ນແວງ | 105°25'30.7"E |
| | ເສັ້ນຂະໜານ | 17°35'24.9"N |
| ທິດຕາເວັນຕົກ | ເສັ້ນແວງ | 104°47'21.4"E |
| | ເສັ້ນຂະໜານ | 18°01'48.4"N |

ຂອບເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໃຫ້ອີງໃສ່ແຜນທີ່ພູມມີປະເທດ ມາດຕາສ່ວນ 1:100.000 ໂດຍຖືເອົາເສັ້ນຂະໜານ ແລະ ເສັ້ນແວງເປັນຫຼັກ ສົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ: ສັນພູ (ສັນປັນນ້ຳ), ສາຍຫ້ວຍ, ແມ່ນ້ຳ, ເສັ້ນທາງ ເປັນຂີດໝາຍ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາເປັນຢ່າງດີ.

ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີເນື້ອທີ່ທັງໝົດ 427.770 ຮຕ (ສີ່ຮ້ອຍຊາວເຈັດພັນ ເຈັດຮ້ອຍເຈັດສິບ ເຮັກຕາ) ຊຶ່ງກວມເອົາແຂວງ ຄຳມ່ວນ 364.150 ຮຕ (ສາມຮ້ອຍຫົກສິບສີ່ພັນ ໜຶ່ງຮ້ອຍຫ້າສິບ ເຮັກຕາ) ແລະ ແຂວງບໍລິຄຳໄຊ 63.620 ຮຕ (ຫົກສິບສາມພັນ ຫົກຮ້ອຍຊາວ ເຮັກຕາ).

ທີ່ຕັ້ງ ແລະ ເນື້ອທີ່ ຂອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ໄດ້ສະແດງໃຫ້ເຫັນຢູ່ໃນແຜນທີ່ມາດຕາສ່ວນ 1:350.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແມ່ນອົງການຄຸ້ມຄອງ ແລະ ປົກປັກຮັກສາເຂດແຫຼ່ງນ້ຳ ນ້ຳເທີນ 2 ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ສະບັບເລກທີ 122/ນຍ, ລົງວັນທີ 21 ເມສາ 2017 ໂດຍປ່ຽນຊື່ ດັ່ງນີ້:

1. ສະພາບໍລິຫານ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນ້ຳ ນ້ຳເທີນ 2 ມາເປັນ ຄະນະກຳມະການບໍລິຫານ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ;
2. ກອງເລຂາ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນ້ຳ ນ້ຳເທີນ 2 ມາເປັນ ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດຳເນີນຢູ່ໃນເຂດອຸທິຍານແຫ່ງຊາດ ຫຼື ພື້ນທີ່ໃກ້ຄຽງທີ່ສົ່ງຜົນກະທົບຕໍ່ ອຸທິຍານແຫ່ງຊາດ;
5. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
6. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ